ສຳນັກງານ ຄຄຊ
ເລກທີ...0487.......
ວັນທີ 10 MAY 2018
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 20/ຫກ
ນະຄອນຫຼວງວຽງຈັນ, ວັນທີ: 10 ພຶດສະພາ 2018

# ບົດລາຍງານ
## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 23-27/04/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນໜຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,81% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກດັດສະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກ ຂອງເດືອນ 04/2018 ເພີ່ມຂຶ້ນຢູ່ທີ່ລະດັບ 128,7 ຈຸດ ຈາກ 127,0 ຈຸດໃນເດືອນຜ່ານມາ ແລະ ປະຊາຊົນທີ່ຂໍສະຫວັດດີການ ຂອງອາທິດທີ 21/04/2018 ຫຼຸດລົງມີຈຳນວນ 209.000 ຄົນ ຈາກ 233.000 ຄົນ ໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 16-20/04/2018 | ອາທິດນີ້ 23-27/04/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2300 | 1,2081 | 1,81% |
| ເຢນ/ໂດລາ | 107,65 | 109,29 | -1,50% |
| ບາດ/ໂດລາ | 31,30 | 31,58 | -0,89% |
| ເປໂຊ/ໂດລາ | 52,16 | 51,70 | 0,89% |
| ຣູເປັຍ/ໂດລາ | 13.875,00 | 13.885,00 | -0,07% |
| ໂດລາສິງກະໂປ/ໂດລາ | 1,3147 | 1,3263 | -0,87% |
| ຢວນ/ໂດລາ | 6,2910 | 6,3363 | -0,71% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 0,63% ຈາກ 68,31 ໂດລາ/ບາເຣວ ມາເປັນ 67,88 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງ ສະຫະລັດອາເມລິກາເພີ່ມຂຶ້ນ 2,17 ລ້ານບາເຣວ ຂອງອາທິດທີ 20/04/2018;
- ລາຄາຄຳຫຼຸດລົງ 1,71% ຈາກ 1.340,60 ໂດລາ/ອອນ ມາເປັນ 1.317,71 ໂດລາ/ອອນ ເນື່ອງຈາກການແຂງຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,14% ແຕ່ແຂງຄ່າຂຶ້ນ 0,65% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 0,24% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,54% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 20/04/2018 | | | ອາທິດນີ້ 27/04/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.308,89 | 8.329,15 | 8.321,15 | 8.321,44 | 8.345,01 | 8.333,01 | -0,15% | -0,19% | -0,14% | -0,24% | -0,22% | -0,24% |
| ບາດ | 266,49 | 267,95 | 267,26 | 264,66 | 265,84 | 265,54 | 0,69% | 0,79% | 0,65% | -3,64% | -3,42% | -3,54% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 1,08% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 12,52%;
- ປະລິມານເງິນ M2 ຫຼຸດລົງ 0,34% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,08%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (20-26/04/2018) ເຫັນວ່າ ທທກ ຂາຍໂດລາສຸດທິ 5,01 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 44,97 ລ້ານໂດລາ ແລະ ຂາຍໂດລາໄດ້ 49,98 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 424,26 ລ້ານບາດ (ໃນນີ້ຊື້ບາດໄດ້ 332,00 ລ້ານບາດ ແລະ ຂາຍບາດໄດ້ 756,26 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ເພີ່ມຂຶ້ນ 413,80% ແລະ ເງິນບາດ ເພີ່ມຂຶ້ນ 395,43%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈຳນວນ 4,55 ລ້ານໂດລາ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 13,89 ລ້ານໂດລາ ແລະ ເງິນບາດ ຈຳນວນ 271,65 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 13-19/04/2018 | | ອາທິດນີ້ 20-26/04/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **10,04** | **76,44** | **44,97** | **332,00** | **347,91%** | **334,33%** |
| - ທ/ຄທຸລະກິດລັດ | 4,52 | 24,37 | 14,98 | 82,65 | 231,42% | 239,15% |
| - ທ/ຄທຸລະກິດອື່ນໆ | 5,52 | 52,07 | 29,99 | 249,35 | 443,30% | 378,87% |
| **2. ການຂາຍເງິນຕາຕ່າງປະເທດ** | **8,44** | **143,22** | **49,98** | **756,26** | **492,18%** | **428,04%** |
| - ທ/ຄທຸລະກິດລັດ | 2,21 | 42,90 | 18,14 | 228,94 | 720,81% | 433,66% |
| - ທ/ຄທຸລະກິດອື່ນໆ | 6,23 | 100,32 | 31,84 | 527,32 | 411,08% | 425,64% |
| **ຊື້-ຂາຍສຸດທິ ທທກ** | **1,60** | **-66,78** | **-5,01** | **-424,26** | **-413,13%** | **535,31%** |
| - ຜົດຕ່າງຊື້-ຂາຍ | 15,94% | -87,36% | -11,14% | -127,79% | -169,89% | 46,28% |
| **- ມູນຄ່າການຊື້-ຂາຍ** | **18,48** | **219,66** | **94,95** | **1.088,26** | **413,80%** | **395,43%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **0,00** | **0,00** | **-4,55** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 0,00 | 0,00 | 4,55 | 0,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **3,87** | **72,10** | **13,89** | **271,65** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 04/2018 ຄາດວ່າຈະຢູ່ໃນລະດັບ 2,70% (ຕົວເລກຄາດຄະເນ).

**2,5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ເພີ່ມຂຶ້ນ 281,7% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 55,67 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 734,6% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 90,55 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 640 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 232 ສະບັບ ເທົ່າກັບ 56,86% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 292,04 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 116,15 ຕື້ກີບ ເທົ່າກັບ 66,03%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (20-26/04/2018) ມີທັງໝົດ 4,241 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 4,145 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 1.214,83 ຕື້ກີບ ຈາກ 239,71 ຕື້ກີບ ມາເປັນ 1.454,54 ຕື້ກີບ ເທົ່າກັບ 506,79%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 96 ຄັ້ງ, ມູນຄ່າການໂອນ ຈຳນວນ 215,24 ຕື້ກີບ.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 936,79 ຈຸດ ຫຼຸດລົງ ຈາກ 954,31 ຈຸດ ຫຼື ເທົ່າກັບ 1,84% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 111.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 587.625.000 ກີບ ເພີ່ມຂຶ້ນ 564,70% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 24,15% ຂອງມູນຄ່າການຊື້-ຂາຍທັງໝົດ.

➢ ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (ກີບ) | ລາຄາ ປ່ຽນແປງ (%) |
| **BCEL** | 7.600 | 40.660.000 | 5.350 | **92.000** | **489.060.000** | **5.300** | 1.110,53 | 1.102,80 | -50 | -0.93 |
| **EDL-GEN** | 9.100 | 42.770.000 | 4.700 | **19.400** | **88.980.000** | **4.600** | 113,19 | 108,04 | -100 | -2,13 |
| **LWPC** | 200 | 800.000 | 4.000 | - | - | **4.200** | -100,00 | -100,00 | 200 | 5,00 |
| **PTL** | - | - | 1.700 | **200** | **350.000** | **1.700** | - | - | - | 0,00 |
| **SVN** | - | - | 2.900 | - | - | **2.900** | - | - | - | 0,00 |
| **PCD** | - | - | 1.400 | - | - | **1.400** | - | - | - | 0,00 |
| **LCC** | 1.200 | 2.820.000 | 2.350 | **100** | **235.000** | **2.300** | -91,67 | -91,67 | -50 | -2,13 |
| ທັງໝົດ | 18.100 | 87.050.000 | | 111.700 | 578.625.000 | | 517,13 | 564,70 | | |

5. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ: ❶ ກອງປະຊຸມລັດຖະບານປະຈຳເດືອນ ເມສາ 2018 ທີ່ (ຫ້ອງປະຊຸມລັດຖະບານ), ❷ ກອງປະຊຸມຮ່ວມກັບຄະນະປະຈຳຂອງສະພາແຫ່ງຊາດ ເພື່ອນຳສະເໜີການປັບປຸງກົດໝາຍວ່າດ້ວຍ ທຫລ ທີ່ (ຫ້ອງປະຊຸມຄະນະປະຈຳສະພາແຫ່ງຊາດ), ❸ ກອງປະຊຸມປຶກສາຫາລືກ່ຽວກັບຄວາມຄືບໜ້າການແກ້ໄຂບັນຫາວຽກງານສະເພາະ ທີ່ (ຫສນຍ), ❹ ກອງປະຊຸມກະກຽມເອກະສານລາຍງານ ຫສນຍ ເພື່ອກະກຽມລາຍງານຕໍ່ສູນກາງ ແລະ ສະພາແຫ່ງຊາດ ທີ່ (ທຫລ), ❺ ກອງປະຊຸມນຳສະເໜີຮ່າງກົດໝາຍວ່າດ້ວຍ ທະນາຄານທຸລະກິດ (ສະບັບປັບປຸງ) ທີ່ (ທຫລ), ❻ ກອງປະຊຸມປຶກສາຫາລືກ່ຽວກັບກົນໄກການກູ້ຢືມບ້ວງ 30 ລ້ານໂດລາ ຂອງກຸ່ມບໍລິສັດດາວເຮືອງຈຳກັດ ທີ່ (ກະຊວງການເງິນ), ❼ ກອງປະຊຸມເຜີຍແຜ່ແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດ ຕາມມາດຕະການບາເຊວ ແຕ່ປີ 2017-2025 ທີ່ (ທຫລ), ❽ ກອງປະຊຸມ ເຜີຍແຜ່ມາດຖານການຈັດລຳດັບໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ (ສທຄ) ແລະ ❾ ກອງປະຊຸມສຳມະນາວຽກງານປະກັນໄພເງິນຝາກ ທີ່ (ໂຮງແຮມລາວພລາຊາ).

- ສຳເລັດຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກຜູ້ອຳນວຍການທະນາຄານ ເອເອັນແຊັດ ພ້ອມດ້ວຍຄະນະ.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມກົມການເມືອງ ທີ່ (ຫ້ອງວ່າການສູນກາງພັກ), ❷ ກອງປະຊຸມລັດຖະມົນຕີກະຊວງການເງິນ ແລະ ຜູ້ວ່າທະນາຄານກາງອາຊຽນ+3, ❸ ກອງປະຊຸມຮອງລັດຖະມົນຕີກະຊວງການເງິນ ແລະ ຮອງຜູ້ວ່າການທະນາຄານກາງອາຊຽນ+3, ❹ ກອງປະຊຸມປະຈຳປີ 2018 ຂອງທະນາຄານພັດທະນາອາຊີ, ❺ ກອງປະຊຸມຄະນະປະເມີນຄວາມສ່ຽງລະດັບຊາດດ້ານການການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ (ຕລຊລ), ❻ ກອງປະຊຸມຮ່ວມກັບ ທ່ານ ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ທີ່ (ທຫລ);

- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກອົງການຮ່ວມມືສາກົນຍີ່ປຸ່ນ (JICA).

ຫົວໜ້າຫ້ອງການ

ໃໝ່ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ